# ບົດທີ 19

# ອານາເນຍ ແລະ ໂຊໂລ: ການອົບຮົມຜູ້ທີ່ຮັບເຊື່ອໃໝ່




*ໃຫ້ອ່ານ ກຈກ 9:1-9*

**1** ກ. ໃຜຮັບເຊື່ອໃນພະເຢຊູເມື່ອເດີນທາງຈາກເຢລູຊາເລັມໄປດາມາເຊ? ______________

ຂ. ຄົນຜູ້ນັ້ນກາຍເປັນຜູ້ປະກາດພະທຳທີ່ຕັ້ງຄຼິດສະຕະຈັກໄວ້ຫຼາຍບ່ອນ. ຕໍ່ໄປເພິ່ນເອົາຊື່ໃໝ່ຄື ຊື່ຫຍັງ? (ກຈກ 13:7) ______________________________________________

**2** ການຫຼົບຕັ້ງໃຈໃໝ່ຢ່າງໂຊໂລເປັນອັດສະຈັນຂອງພະເຈົ້າແທ້. ເມື່ອມີຄົນຮັບເຊື່ອໃນພະເຢຊູໃໝ່ເລີຍເປັນກິດຈະ ການຂອງພະເຈົ້າ ແຕ່ມະນຸດກໍອາດຈະມີສ່ວນຢູ່ດ້ວຍ ທ່ານໂຊໂລເຫັນຄຼິດສະຕຽນຄົນໃດຕາຍ? (ກຈກ 7:54-60) __________________________________

**3** ກ. ໃນຂະນະທີ່ຈວນຈະຕາຍ ຊະເຕຟາໂນອ້ອນວອນທູນຫຍັງ? (ກຈກ 7:60) __________

_________________________________________________________________

ຂ. ໃຜເຝົ້າເສື້ອຂອງຄົນທີ່ຂ້າຊະເຕຟາໂນ? (ຂໍ້ 58) ____________________________

**4** ທ່ານໂຊໂລເຫັນຊະເຕຟາໂນຕາຍໂດຍບໍ່ຢ້ານ ແລະຍິ່ງກວ່ານັ້ນອີກເພິ່ນພ້ອມໃຈຍົກຜິດຂອງຜູ້ທີ່ຂ້າ. ໂຊໂລເຫັນເຫດ ການໃດທີ່ອາດຈະເຮັດໃຫ້ເພິ່ນຄິດຮັບພິຈາລະນາເລື່ອງຄຼິດສະຕຽນ?

_________________________________________________________________

**5** ກ. ກ່ອນທີ່ຈະຮັບເຊື່ອໃນພະເຢຊູ ມີຄົນໃດທີ່ສະແດງທ່າທີຂອງຄຼິດສະຕຽນໃຫ້ໂຊໂລເຫັນ?

_________________________________________________________________

ຂ. ໃຫ້ອ່ານ ກຈກ 9:4-5. ປະການໃດຕໍ່ໄປນີ້ເປັນກິດຈະການຂອງພະເຈົ້າໂດຍສະເພາະ? (ເລືອກຂໍ້ດຽວ)

______ ການຕາຍຂອງຊະເຕຟາໂນ

______ ທີ່ພະເຢຊູປາກົດຕົວຕໍ່ໂຊໂລ

______ ຄຳເທດສະໜາຂອງຟີລິບໃນແຂວງຊາມາເລຍ

**6** ກ. ເທື່ອໃດທີ່ມີຄົນຫຼັບຕັ້ງໃຈໃໝ່ມາຫາພະເຈົ້າ ແມ່ນມະນຸດ ຫຼືພະເຈົ້າທີ່ເປັນພະຍານກ່ອນ?

______________________________________________

ຂ. ທີຫຼັງແມ່ນໃຜທີ່ປາກົດຕົວໃຫ້ໂຊໂລເຫັນ? ______________________

**7** ກ. ແມ່ນໃຜເປັນພະຍານຕໍ່ໂປໂລໃນເມື່ອເວລາຈະຕາຍ? ________________

ຂ. ຕໍ່ໄປໂປໂລຜະເຊີນໜ້າກັບອີງໃດ? ______________________

**8** ໂຊໂລມັກແຕ່ສວຍໂອກາດກ່າວເລື່ອງການນັ້ນ. ເພິ່ນກ່າວຕໍ່ໜ້າປະຊາຊົນ, ຕໍ່ໜ້ານັກທຳ, ແລະຕໍ່ໜ້າພະນັກງານ ໃນພະທຳ ກິດຈະການ ມີສອງເທື່ອທີ່ລາຍງານເລື່ອງນັ້ນອີກ. ໃຫ້ທ່ານເບິ່ງຂໍ້ອ້າງໃນວົງເລັບໃຕ້ຫົວເລື່ອງ “ໂຊໂລຫຼັບ ຕັ້ງໃຈໃໝ່” ໃນ ກຈກ 9:1.

ກ. ກິດຈະການ ບົດແລະຂໍ້ໃດ ບັນທຶກເລື່ອງທີ່ເພິ່ນກ່າວຕໍ່ໜ້າຝູງຊົນໃນກຸງເຢລູຊາເລັມ?

______________________________________________

ຂ. ບົດແລະຂໍ້ໃດຕໍ່ໜ້າກະສັດອາຄະລິປາ? ______________________

**9** ທ່ານຈື່ບໍ່ວ່າ ມີກະສັດເຮໂລດອາຄະລິປາສອງຄົນໃນພະທຳກິດຈະການ.

- ອາຄະລິປາ ທີໜຶ່ງເປັນບິດາທີ່ຂ້າຢາໂກໂບ ໃນ ກຈກ ບົດ 12. ເພິ່ນເປັນຫຼານຂອງເຮໂລດຜູ້ຍິ່ງໃຫຍ່.
- ອາຄະລິປາ ທີສອງເປັນບຸດທີ່ຟັງຄຳເທດສະໜາຂອງໂປໂລ (ໂຊໂລ) ໃນ ກຈກ ບົດ 26. ຜູ້ນີ້ເປັນ ________ ຂອງເຮໂລດຍິ່ງໃຫຍ່. (ຕື່ມຄວາມທີ່ຂາດ)

**10** ກ. ເຮໂລດອາຄະລິປາອີງໃດຂ້າອ້າຍຂອງໂຢຮັນ? ____________________

ຂ. ໂປໂລແກ້ຄະດີຕໍ່ໜ້າອາຄະລິປາອີງໃດ? ______________________

**11** ກ. ຝູງຊົນໃນກຸງເຢລູຊາເລັມ ແລະອາຄະລິປາທີສອງໄດ້ຍິນຄຳພະຍານເລື່ອງນັ້ນຈາກໃຜ?

______________________________________________

ຂ. ຜູ້ບັນທຶກພະທຳກິດຈະການຄືລູກາ ກ່າວເລື່ອງການຫຼັບຕັ້ງໃຈໃໝ່ຂອງໂຊໂລໃນ ກຈກ ບົດໃດ? ______________________________________

**12** ກ. ມີທີ່ລາຍງານເລື່ອງການກັບໃຈໃໝ່ຂອງໂປໂລໃນພະທຳກິດຈະການ ຈັກເທື່ອ? ______

ຂ. ອາຈານໂປໂລເອງກ່າວມາຈັກເທື່ອ? ______________________

ຄ. ອີກຄົນໜຶ່ງທີ່ກ່າວເລື່ອງນັ້ນຄືໃຜ? ______________________

ງ. ໂປໂລແກ້ຄະດີຕໍ່ເຮໂລດອີງໃດ? ______________________

**13** ກ. ເພິ່ນຫຼືບຕັ້ງໃຈໃໝ່ໃນເມື່ອເວລາເດີນທາງ. ໃນ ກຈກ 9:1-2 ເຫັນວ່າເພິ່ນຈະເດີນທາງໄປໃສ? ______________________________

ຂ. ເພິ່ນຖືໜັງສືຈາກມະຫາປະໂລຫິດຢູ່ກຸງໃດ? ______________________________

**14** ໃຫ້ທ່ານກັບໄປເບິ່ງໜ້າປົກບົດທີ 19 ນີ້ ແລ້ວອ່ານເລື່ອງເມືອງດາມາເຊອີກ ທັງໃຫ້ສັງເກດສະຖານທີ່ຕ່າງ ໆ ໃນແຜນທີ່ ດ້ວຍ. ໃນຂໍ້ຄວາມຕໍ່ໄປນີ້ ໃຫ້ຂ້າອອກຄວາມໃດທີ່ບໍ່ຈິງ.

ກ. ດາມາເຊຢູ່ຫ່າງຈາກເຢລູຊາເລັມ 15 ຫຼັກ

ຂ. ເປັນເມືອງຫຼວງຂອງປາແລັດສະຕິນ

ຄ. ເປັນເມືອງໃໝ່ ໆ

ງ. ເປັນເມືອງຫຼວງຂອງຊີເລຍ

ຈ. ເປັນເມືອງບູຮານແທ້

ສ. ຢູ່ຫ່າງຈາກເຢລູຊາເລັມ 220 ຫຼັກ

ຊ. ມີໝາກໄຂ່ຂາຍ

ຍ. ບໍ່ມີຜະລິດຫຍັງເລີຍ



**15** ໃຫ້ທ່ານຕື່ມຄວາມທີ່ຂາດຕໍ່ໄປນີ້:

ໂຊໂລອອກຈາກກຸງ ______________ ທີ່ເປັນເມືອງຫຼວງຂອງປະເທດ ______________

ໄປສູ່ ເມືອງ ________________ ທີ່ເປັນເມືອງຫຼວງຂອງ ______________________

ມີໄລຍະທາງປະມານ ____________ ຫຼັກ. (ຍ່າງໄປ 5 ຫຼື 6 ມື້ຈຶ່ງຮອດ)

**16** ນັກປະຫວັດສາດໂຢສີຟັດ ລາຍງານວ່າ ໃນສະໄໝນັ້ນ ເມືອງດາມາເຊມີໝູ່ຄົນຢິວຫຼາຍ. ອີກບໍ່ຫຼາຍປີເຈົ້າຈັກກະພັດ ໂລມທີ່ຊື່ເນໂລສັ່ງຂ້າຄົນຢິວໃນເມືອງດາມາເຊ 10.000 ກວ່າຄົນ.

ກ. ໂຊໂລນຶກຈະພົບຄຼິດສະຕຽນໃນບ່ອນໃດ? (ກຈກ 9:2) ______________________

ຂ. ສະແດງວ່າພວກຄຼິດສະຕຽນເຫຼົ່ານັ້ນຈະເປັນຊາດຢິວ ຫຼືຄົນຕ່າງຊາດ? ____________

**17** ບໍ່ແມ່ນວ່າໂຊໂລບໍ່ຖືສາດສະໜາ ເພິ່ນຖືຢ່າງກະຕືລືລົ້ນ. ໃຫ້ອ່ານພະທຳຟີລິບປອຍ 3:4-6

ກ. ເພິ່ນຖືພະບັນຍັດຕາມໃນຄະນະຟາລີຊາຍ ຫຼືຊາດູກາຍ? ____________________

ຂ. ໃນສອງພວກນັ້ນ ແມ່ນຟາລີຊາຍ ຫຼືຊາດູກາຍທີ່ເຄັ່ງຄັດກວ່າ? _________________

**18** ພວກຟາລີຊາຍເຄີຍອ້ອນວອນຫາພະເຈົ້າ ແລະອ່ານພະທຳຢ່າງປົກກະຕິ ເພິ່ນຖືວ່າການຂົ່ມເຫງຄຼິດສະຕຽນເປັນທີ່ ຊອບໃຈພະເຈົ້າ. ໃນ ກຈກ 9:4-5 ເຫັນວ່າທີ່ຈິງ ໂຊໂລຂົ່ມເຫງໃຜ?

______________________________________________________________

**19** ພວກຄຼິດສະຕຽນໃນດາມາເຊ ຮູ້ວ່າໂຊໂລຕັ້ງໃຈຈະຂົ່ມເຫງຄຼິດສະຕຽນ.

ກ. ກ່ອນທີ່ໂຊໂລຈະເຖິງເມືອງດາມາເຊ ຄຼິດສະຕຽນຖືວ່າເປັນພີ່ນ້ອງ ຫຼືເປັນຜູ້ທີ່ຂົ່ມເຫງເຂົາ?

______________________________________________________________

ຂ. ຫືຫຼັງເດ? ______________________________________________________

**20** ກ. ພວກຄຼິດສະຕຽນໃນເມືອງດາມາເຊ ນຶກວ່າໂຊໂລມາຫຍັງ? ____________________
ຂ. ເຂົາບໍ່ຮູ້ວ່າໂຊໂລກາຍເປັນ ______________________ ຂໍາແລ້ວ. (ຕື່ມຄວາມຂາດ)
ຄ. ເຂົາບໍ່ຮູ້ວ່າ ໂຊໂລຜະເຊີນໜ້າກັບໃຜຕາມທາງນັ້ນ? ________________________

**21** ໂຊໂລພົບພໍ້ພະເຢຊູແລ້ວ ແຕ່ຍັງຂາດຄຼິດສະຕຽນຄົນໜຶ່ງທີ່ຈະມາອົບຮົມເພິ່ນ ແລະແນະນໍາໃຫ້ຄຼິດສະຕຽນຄົນອື່ນຮັບ ຮູ້ເພິ່ນ. ໃຫ້ອ່ານ ກຈກ 9:10-12
ກ. ໂຊໂລຢູ່ໃນເມືອງດາມາເຊ ຖະໜົນໃດ? ________________________________
ຂ. ຜູ້ທີ່ພະເຢຊູເອີ້ນໃຫ້ໄປຫາໂຊໂລຊື່ຫຍັງ? _______________________________

**22** ຄິດວ່າອານາເນຍມີສອງໃຈໃນເລື່ອງນີ້. ໃຈ ໜຶ່ງຢາກເຮັດເອົາຕາມຄໍາສັ່ງຂອງພະເຈົ້າ ແຕ່ອີກໃຈ ໜຶ່ງບໍ່ຢາກເຮັດ ເພາະ ຫຍັງ? (ເລືອກ)
ກ. ______ ຢູ່ໄກຫຼາຍ
ຂ. ______ ຮູ້ວ່າໂຊໂລເຄີຍຂົ່ມເຫງຄຼິດສະຕຽນ
ຄ. ______ ຢູ່ບໍ່ສະບາຍ
ງ. ______ ເມຍບໍ່ຢາກໃຫ້ໄປ

**23** ໃຫ້ອ່ານ ກຈກ 9:15-19. ອານາເນຍເຮັດຕາມຄໍາສັ່ງຂອງພະເຢຊູ ເພິ່ນຈຶ່ງມີສິດພິເສດແທ້. ແມ່ນອານາເນຍທີ່ແນະນໍາ ໃຫ້ໂຊໂລເຂົ້າຮ່ວມນະມັດສະການກັບພີ່ນ້ອງຄຼິດສະຕຽນ. ຜົນສຸດທ້າຍທຸກຄົນຮັບຮູ້ໂຊໂລ . ກ. ກ່ອນທີ່ບໍ່ໄດ້ຜະເຊີນໜ້າພະເຢຊູ ພວກຄຼິດສະຕຽນໃນເມືອງດາມາເຊທັງອານາເນຍດ້ວຍ ຖືວ່າໂຊໂລເປັນ ຢ່າງໃດ?____________________________
ຂ. ແຕ່ໃນ ກຈກ 9:17 ອານາເນຍຕ້ອນຮັບໂຊໂລໂດຍເວົ້າວ່າຢ່າງໃດ? _____________

**24** ນາເນຍເປັນຕົວຢ່າງທີ່ດີ ເຖິງວ່າເພິ່ນຮູ້ເລື່ອງການຂົ່ມເຫງແລະຄວາມກຽດຊັງກັນໃນອາດີດກໍຕາມ ແຕ່ເພິ່ນຍັງ ຮັບຮູ້ໂຊ ໂລວ່າເປັນພີ່ນ້ອງໃນພະເຢຊູຄຼິດ. ໃນທຸກວັນນີ້ ອາດຈະມີຄົນມາຮັບເຊື່ອໃນພະເຢຊູທີ່ເຄີຍເປັນໝໍຜີ, ຄົນ ຂີ້ຢາ, ຂີ້ເຫຼົ້າ ຫຼືອື່ນ ໆ ທີ່ຜິດສັງຄົມ ຫຼືບໍ່ຖືກກັບຄອບຄົວ ແຕ່ພະເຈົ້າອາດຈະໃຊ້ທ່ານເອງໃນການຊ່ວຍໃຫ້ເຂົາສ້າງ ຊີວິດໃໝ່. ໃນ ການນັ້ນສົມຄວນເອົາອານາເນຍເປັນຕົວຢ່າງ. ທ່າທີຂອງອານາເນຍເປັນຢ່າງໃດ? (ເລືອກ)
ກ. ______ ບໍ່ຍອມຮັບ ເພາະເຄີຍຖືວ່າເປັນສັດຕູກັນ
ຂ. ______ ເພິ່ນບໍ່ຢາກແນະນໍາໂຊໂລໃຫ້ໝູ່ຄຼິດສະຕຽນເຫັນ
ຄ. ______ ເພິ່ນຮັບຮູ້ວ່າໂຊໂລເປັນພີ່ນ້ອງຄຼິດສະຕຽນ
ງ. ______ ເພິ່ນຕິແຕ່ເລື່ອງໃນອາດີດ

**25** ກ. ກ່ອນໂຊໂລໄປເຖິງດາມາເຊ ພວກຄຼິດສະຕຽນຖືວ່າເປັນຢ່າງໃດ? _______________
ຂ. ຫຼັງຈາກອານາເນຍແນະນໍາແລ້ວເປັນຢ່າງໃດ? ______________________________

**26** ກ. ເຖິງວ່າ ອານາເນຍຮູ້ຈັກລັກສະນະຂອງໂຊໂລກ່ອນທີ່ບໍ່ໄດ້ຮັບເຊື່ອໃນພະເຢຊູກໍຕາມ ແຕ່ເພິ່ນຍັງຕ້ອນຮັບບໍ່? _______________________________________________

ຂ. ເຖິງວ່າພວກເຮົາເປັນຄົນບາບກໍຕາມ ແຕ່ເມື່ອເຮົາມາຫາພະເຢຊູ ພະອົງຈະຕ້ອນຮັບເຮົາບໍ່? ____________________

ຄ. ຖ້າມີຄົນບາບທີ່ມາເຊື່ອພະເຢຊູ ທີ່ປະຊຸມຄຣິດສະຕຽນຄວນຕ້ອນຮັບຢ່າງໃດ? ________ ____________________

**27** ທ່າທີຂອງພວກຄຣິດສະຕຽນຕໍ່ຄົນນອກທີ່ມາຮັບເຊື່ອໃໝ່ສຳຄັນຫຼາຍ. ຄວນທີ່ຈະສະແດງຄວາມຮັກຂອງພະເຢຊູຕໍ່ເຂົາ ແລະຢ່າຟ້າວຕິຕຽນເຂົາໂດຍບໍ່ມີເຫດ.

ກ. ໃຫ້ອ່ານ ລູກາ 15:28-30. ຜູ້ເປັນອ້າຍທີ່ຢູ່ກັບພໍ່ຕະຫຼອດ ຕ້ອນຮັບລູກທີ່ເສຍຢ່າງໃດ? __

ຂ. ແຕ່ອານາເນຍຕ້ອນຮັບໂຊໂລຢ່າງໃດ? ____________________

**28** ເຮົາຄວນສະແດງທ່າທີໃດຕໍ່ຄຣິດສະຕຽນໃໝ່? (ເລືອກ)

ກ. ______ ທ່າທີຂອງອານາເນຍຕໍ່ໂຊໂລ

ຂ. ______ ທ່າທີຂອງອ້າຍຕໍ່ນ້ອງທີ່ເສຍ

**29** ເຖິງວ່າເຮົາຈະຕ້ອນຮັບຄຣິດສະຕຽນໃໝ່ໂດຍບໍ່ມີເງື່ອນໄຂປະການໃດກໍຕາມ ແຕ່ເຮົາຍັງເຊື່ອຢູ່ວ່າ ພະເຈົ້າຈະມີແຜນ ການເພື່ອຄຣິດສະຕຽນໃໝ່ນັ້ນ. ໃຫ້ອ່ານ ກຈກ 9:15 ພະເຈົ້າມີແຜນການທີ່ຈະໃຫ້ໂຊໂລເປັນພະຍານຕໍ່ໃຜ? (ຕື່ມ)

ກ. ຍັງບັນດາ ____________________

ຂ. ຍັງ ____________________ ທັງຫຼາຍ

ຄ. ຍັງຊົນຊາດ ____________________

**30** ເມື່ອໂຊໂລກ່າວຄຳພະຍານຕໍ່ອາຄະລິປາໃນ ກຈກ 26:20 ເພິ່ນບອກວ່າເພິ່ນປະກາດແກ່ຄົນ

ກ. ໃນເມືອງໃດ? ____________________

ຂ. ໃນກຸງໃດ? ____________________

ຄ. ແກ່ຊາວໃດ? ____________________



**31** ຫຼັງຈາກໂຊໂລຫຼັບຕັ້ງໃຈໃໝ່ ເພິ່ນ ໄປແຂວງຢູດາແລະຊາມາເລຍ. ໄປ ບ່ອນໃດກໍຕາມ ເພິ່ນ ປະກາດແຕ່ຂ່າວ ປະເສີດຂອງພະເຢຊູ. ໃນແຜນທີ່ຂ້າງຂວານີ້ ເພິ່ນປ່າວປະ ກາດໃນ 3 ເມືອງໃດ?

ກ. ______________________________

ຂ. ______________________________

ຄ. ______________________________




**32** ກ. ເມືອງໃດທີ່ຢູ່ໃນແຂວງຢູດາ? ______________________________

ຂ. ເມືອງໃດຢູ່ແຂວງຊາມາເລຍ? (ຕາມແຜນທີ່) ______________________________

**33** ຫຼັງຈາກມາເຊື່ອໄວ້ວາງໃຈໃນພະເຢຊູ ໂຊໂລເອົາຊື່ໃໝ່ຊື່ວ່າໂປໂລ. ຫຼັງຈາກນັ້ນໄປເພິ່ນເທດສະ ນາປ່າວປະກາດໄປ ຫຼາຍບ່ອນ ຕາມແຜນການທີ່ພະເຈົ້າຈັດໄວ້ໃຫ້. ເຖິງວ່າບໍ່ແມ່ນຄຼິດສະຕຽນທຸກຄົນຈະກາຍເປັນນັກເທດ ແຕ່ທຸກຄົນ ຄວນຮັບໃຊ້ພະເຈົ້າຕາມແຜນການຂອງພະອົງ. ໃນແຕ່ລະຂໍ້ຕໍ່ໄປນີ້ ໃຫ້ທ່ານໝາຍຂໍ້ໃດທີ່ອາດຈະເປັນແຜນການ ຂອງພະເຈົ້າສຳລັບທ່ານ ຫຼືຜູ້ອື່ນ:

ກ. ______ ໃຫ້ເປັນພະຍານຕໍ່ບຸກຄົນຈົນກວ່າມີຫຼາຍຄົນມາຮັບເຊື່ອໃນພະເຢຊູ.

ຂ. ______ ໃຫ້ມີໃຈອົດທົນໃນການຂົ່ມເຫງເໝືອນຊະເຕຟາໂນ.

ຄ. ______ ບໍ່ເຂົ້ານະມັດສະການພະເຈົ້າ

ງ. ______ ເທດສະໜາປ່າວປະກາດພະທຳຂອງພະເຈົ້າ

ຈ. ______ ຢູ່ຕາມທີ່ເຄີຍຢູ່ກ່ອນຈະຮັບເຊື່ອໃນພະເຢຊູ

ສ. ______ ຮັບໃຊ້ພະເຈົ້າໃນຄຼິດສະຕະຈັກທ້ອງຖິ່ນ

**34** ເມື່ອເຮົາອົບຮົມຄຼິດສະຕຽນໃໝ່ ສົມຄວນຈະໃຫ້ເພິ່ນສະແຫວງຫານ້ຳພະໄທຂອງພະເຈົ້າໃນຊີວິດຂອງເພິ່ນ.

ກ. ນ້ຳພະໄທຂອງພະເຈົ້າໃນຊີວິດຂອງໂປໂລຄືຫຍັງ? (ກຈກ 9:15) ______________

______________________________________________

ຂ. ໃນ ກຈກ 26:19-20 ເຫັນວ່າໂປໂລກ່າວປະກາດໃນສອງເມືອງໃດ?

______________________ ແລະ ______________________

ຄ. ປະກາດແກ່ຊາວໃດ? ______________________________

**35** ໂປໂລເຊື່ອຟັງຄວາມຂອງພະເຈົ້າຕັ້ງແຕ່ຕົ້ນມາ.

ກ. ໃນ ມັດທາຍ 28:19 ຄົນທຸກຊາດທີ່ກາຍເປັນລູກສິດຂອງພະອົງຈິ່ງຈະຮັບຫຍັງ? ________

ຂ. ໃນ ກຈກ 9:18 ເຫັນວ່າໂຊໂລເຊື່ອຟັງຕາມຄຳສັ່ງນັ້ນ ຈິ່ງຮັບຫຍັງ? ______________

**36** ອານາເນຍສອນໂຊໂລໃຫ້ຟັງຄວາມຂອງພະເຈົ້າ. ໃນ ກຈກ 9:17 ອານາເນຍອ້ອນວອນເພື່ອຈະໃຫ້ໂຊໂລເຕັມໄປ ດ້ວຍຫຍັງ? ______________________________________

**37** ອານາເນຍມີເປົ້າໝາຍສອງປະການເພື່ອໂຊໂລຄື: (ຕື່ມຄວາມທີ່ຂາດ)

ກ. ໃຫ້ເຊື່ອຟັງ __________________________ ຂອງ ______________________

ຂ. ໃຫ້ເຕັມໄປດ້ວຍ ________________________________________________

**38** ກ. ທ່າທີຂອງຄຣິດສະຕຽນເກົ່າຕໍ່ຄຣິດສະຕຽນໃໝ່ຄວນຈະເປັນຢ່າງໃດ? ______________

______________________________________________________________

ຂ. ເຮົາຄວນເອົາຜູ້ໃດເປັນຕົວຢ່າງໃນການຕ້ອນຮັບຄຣິດສະຕຽນໃໝ່? ________________

**39** ກ. ພະເຈົ້າມີຫຍັງເພື່ອອະນາຄົດຂອງຄຣິດສະຕຽນໃໝ່ທຸກຄົນ? ___________________

ຂ. ເຮົາຄວນຈັດເປົ້າໝາຍໄວ້ເພື່ອຄຣິດສະຕຽນໃໝ່ທີ່ເຮົາຈະອົບຮົມນັ້ນຄື:

- ໃຫ້ເຂົາຮຽນຮູ້ເຊື່ອຟັງຫຍັງ? ______________________________________
- ໃຫ້ເຂົາເຕັມໄປດ້ວຍຫຍັງ? ______________________________________



**40** ຄົນໃດສົມຄວນຊ່ວຍຄຣິດສະຕຽນໃໝ່? (ເລືອກ)

ກ. ______ ສະເພາະສິດຍາພິບານຜູ້ດຽວ

ຂ. ______ ສະເພາະແຕ່ຄົນທີ່ສຶກສາຊັ້ນສູງ

ຄ. ______ ຄຣິດສະຕຽນທີ່ດຳເນີນຊີວິດເໝືອນຄົນທີ່ບໍ່ເຊື່ອ

ງ. ______ ຄຣິດສະຕຽນທີ່ເຕັມໄປດ້ວຍພະວິນຍານບໍລິສຸດ

ຈ. ______ ຄຣິດສະຕຽນທີ່ມັກຕິຕຽນຄົນທີ່ເຊື່ອໃໝ່

ສ. ______ ຄຣິດສະຕຽນທີ່ຟັງຄວາມຂອງພະເຈົ້າ

**41** ຄຣິດສະຕະຈັກໃດຕໍ່ໄປນີ້ຈະສາມາດລ້ຽງຮັກສາຄຣິດສະຕຽນໃໝ່ໄດ້ດີ? (ເລືອກ)

ກ. ______ ຄຣິດສະຕະຈັກທີ່ມີຄົນດຽວທີ່ເຕັມໄປດ້ວຍພະວິນຍານແລະເຊື່ອຟັງພະທຳຂອງພະເຈົ້າ.

ຂ. ______ ຄຣິດສະຕະຈັກທີ່ມີແຕ່ນ້ອຍຄົນທີ່ເຕັມໄປດ້ວຍພະວິນຍານບໍລິສຸດແລະເຊື່ອຟັງພະທຳຂອງພະເຈົ້າ.

ຄ. ______ ຄຣິດສະຕຽນທີ່ຄົນສ່ວນຫຼາຍເຕັມໄປດ້ວຍພະວິນຍານບໍລິສຸດ ແລະເຊື່ອຟັງພະທຳຂອງພະເຈົ້າ.

**42** ໃນທີ່ປະຊຸມຂອງພວກທ່ານ ມີຄົນທີ່ຈະສາມາດອົບຮົມຄຣິດສະຕຽນໃໝ່ໄດ້ບໍ່. ໃຫ້ທ່ານຄາດຄະເນ ມີຄົນໃດທີ່ຈະໃຊ້ຫຼັກ ສູດ "ຊີວິດຢ່າງຄົບບໍລິບູນ" ຫຼື ຫຼັກສູດອື່ນ ໆ ສຳລັບຄຣິດສະຕຽນໃໝ່ໄດ້. ຈຸດໝາຍປາຍທາງຂອງອານາເນຍໃນການ ອົບຮົມໂຊໂລຄວນເປັນເປົ້າໝາຍໃນທີ່ປະຊຸມຂອງທ່ານສຳລັບຄຣິດສະຕຽນໃໝ່ ຄືເປົ້າໝາຍໃດ?

ກ. ____________________________________________

ຂ. ____________________________________________

*ໃຫ້ອ້ອນວອນເພື່ອຄຣິດສະຕະຈັກຂອງທ່ານວ່າຈະສາມາດຊ່ວຍຄົນທີ່ເຂົ້າເຊື່ອໃໝ່. ມີຜູ້ເຊື່ອໃໝ່ທີ່ຂາດຄົນທີ່ຈະແນະນຳ ບໍ່ຈະວາງແຜນການຢ່າງໃດຈຶ່ງຈະສາມາດອົບຮົມຄຣິດສະຕຽນໃໝ່ນັ້ນໄດ້? ອາດຈະແມ່ນວ່າ ພວກທ່ານເອງຈະ ມີໂອ ກາດອົບຮົມເຂົາເໝືອນທີ່ອານາເນຍອົບຮົມໂຊໂລ.*



*ຢ່າລືມບົດເສັງ!*

**ຄຳຕອບ:**

**1** *ກ. ໂຊໂລ ຂ. ໂປໂລ*

**2** *ຊະເຕຟາໂນ*

**3** *ກ. "ຂ້າແຕ່ອົງພະຜູ້ເປັນເຈາ ຂໍໂຜດຢ່າຊົງຖືໂທດເຂົາເພາະບາບນີ້." ຂ. ໂຊໂລ*

**4** *ການຕາຍຂອງຊະເຕຟາໂນ*

**5** *ກ. ຊະເຕຟາໂນ ຂ. ທີ່ພະເຍຊູປາກົດຕົວຕໍ່ໂຊໂລ*

**6** *ກ. ມະນຸດ ຂ. ພະເຍຊູ*

**ຄຳຕອບ (ຕໍ່):**

**7** *ກ. ຊະເຕຟາໂນ ຂ. ພະເຢຊູ (ຫຼັງຈາກຄືນພະຊົນ)*

**8** *ກ. ກຈກ 22:6-16 ຂ. ກຈກ 26:12-18*

**9** *ເຫຼັນ*

**10** *ກ. ທີໜຶ່ງ ຂ. ທີສອງ*

**11** *ກ. ຈາກໂປໂລເອງ ຂ. ບົດ 9*

**12** *ກ. 3 ເທື່ອ ຂ. 2 ເທື່ອ ຄ. ລູກາ ງ. ອາຄະລິປາ (ທີສອງ)*

**13** *ກ. ດາມາເຊ ຂ. ເຢລູຊາເລັມ*

**14** *ຂ້າອອກ ກ, ຂ, ຄ ແລະ ຍ*

**15** *ເຢລູຊາເລັມ... ປາແລັດສະຕິນ... ດາມາເຊ... ຊີເລຍ... 220.*

**16** *ກ. ໂຮງທຳມະເທສະໜາ ຂ. ຢິວ*

**17** *ກ. ຟາລີຊາຍ ຂ. ຟາລີຊາຍ*

**18** *ພະເຢຊູ*

**19** *ກ. ຜູ້ຂົ່ມເຫງ ຂ. ພີ່ນ້ອງ*

**20** *ກ. ຂົ່ມເຫງເຂົາ ຂ. ພີ່ນ້ອງ ຄ. ພະເຢຊູ*

**21** *ກ. ຖະໜົນຊື່ ຂ. ອານາເນຍ*

**22** *ຂ ຖືກ*

**23** *ກ. ຜູ້ທີ່ຂົ່ມເຫງຄຶດສະຕຽນ ຂ. ອ້າຍໂຊໂລເອີຍ*

**24** *ຄ ຖືກ*

**25** *ກ. ຜູ້ຂົ່ມເຫງເຂົາ ຂ. ເປັນພີ່ນ້ອງໃນພະເຢຊູ*

**26** *ກ. ຕ້ອນຮັບ ຂ. ຮັບ ຄ. ຕ້ອນຮັບດ້ວຍຄວາມຍິນດີ*

**27** *ກ. ຄຽດ ຂ. ຕ້ອນຮັບດ້ວຍຄວາມຍິນດີ*

**28** *ກ ຖືກ*

**29** *ກ. ປະຊາຊາດ ຂ. ກະສັດ ຄ. ອິດສະລາເອນ*

**30** *ກ. ດາມາເຊ ຂ. ເຢລູຊາເລັມ ຄ. ຕ່າງປະເທດ*

**31** *ກ. ດາມາເຊ ຂ. ເຢລູຊາເລັມ ຄ. ກາຍຊາເລຍ*

**32** *ກ. ເຢລູຊາເລັມ ຂ. ກາຍຊາເລຍ*

**33** *ກ, ຂ, ງ ແລະ ສ ຖືກ*

**34** *ກ. ປະກາດນາມຂອງພະອົງໄປຍັງບັນດາປະຊາຊາດ ຍັງກະສັດທັງຫຼາຍ ແລະ ຍັງຊົນຊາດອິດສະລາເອນ. ຂ.ດາມາເຊ ແລະ ເຢລູຊາເລັມ*

**35** *ກ. ບັບຕິສະມາ ຂ. ບັບຕິສະມາ*

**36** *ເຕັມໄປດ້ວຍພະວິນຍານບໍລິສຸດ*

**37** *ຄວາມ...ພະເຈົ້າ ຂ. ພະວິນຍານບໍລິສຸດ*

**ຄຳຕອບ (ຕໍ່):**

**38** *ກ. ຄວນຕ້ອນຮັບດ້ວຍຄວາມ ຍິນດີ ຂ. ອານາເນຍ ຄ. ຊາວຕ່າງຊາດ*

**39** *ກ. ແຜນການ (ນ້ຳພະໄທ) ຂ. ຄວາມຂອງພະເຈົາ ພະວິນຍານບໍລິສຸດ*

**40** *ງ ສ ຖືກ*

**41** *ຄ ຖືກ*

**42** *ກ. ໃຫ້ເຂົາເຊື່ອຟັງພະທຳຂອງພະເຈົາ ຂ. ໃຫ້ເຂົາເຕັມໄປດ້ວຍພະວິນຍານບໍລິສຸດ*